**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 19 ເມສາ 2020 (4-19-2020)**

---

## ເປັນຫຍັງການຄືນພຣະຊົນຈຶ່ງເປັນບັນຫາ

*ແມ່ນຫຍັງທີ່ເປັນສິ່ງທີ່ປະດິດຂຶ້ນໃໝ່ຫຼືສິ່ງທີ່ປັບປຸງຂຶ້ນໃໝ່ທີ່ "ຫັນປ່ຽນ-ທັສນະ" ໃໝ່ແກ່ທ່ານ?*

***ຈຸດສຳຄັນໃນບົດຮຽນ:*** *ການຄືນພຣະຊົນຂອງພຣະຄຣິດປ່ຽນແປງທຸກສິ່ງຢ່າງ.*

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ພວກເຮົາດຳລົງຊີວິດທຸກໆມື້ກັບການປະດິດຄິດສ້າງໃໝ່ໃນທຸກປະເພດທີ່ນຳການປ່ຽນແປງອັນໃຫຍ່ຫຼວງຕໍ່ການດຳເນີນຊີວິດແລະການເຮັດວຽກງານຂອງພວກເຮົາ:

- ❖ ກູເທັນເບີກ(The Gutenberg) ການພິມ, ໄດ້ປະດິດໃນສັດຕະວັດທີ່ 15, ທີ່ສາມາດຜະລິດຄຳເວົ້າແລະຄວາມຄິດໄດ້ຢ່າງມະຫາສານ.
- ❖ ໝໍ້ໄຟ(Battery), ກໍໄດ້ແນະນຳໃນປີ 1800, ທີ່ໃຫ້ທາງແກ່ພວກເຮົາໃຫ້ເກັບກຳພະລັງງານໄດ້.
- ❖ ບໍຣິສັດໄຟຟ້າ ເອດີຊັນ(Edison), (1879) ເຮັດໃຫ້ພວກເຮົາເຫັນແຈ້ງສວ່າງຍາມມື້ເວັນແລະຍາມກາງຄືນ.

ການປະດິດຄືແນວນີ້ໄດ້ນຳການປ່ຽນແປງຕໍ່ທາງທີ່ພວກເຮົາດຳລົງຊີວິດແລະເຮັດວຽກງານ, ແຕ່ວ່າພວກມັນມີມາແຕ່ດົນແລ້ວແລະກໍຢູ່ຕາມສະຖານທີ່ສາມັນເທົ່າທຸກວັນນີ້, ພວກເຮົາກໍບໍ່ໄດ້ໃສ່ໃຈກັບພວກມັນອີກ. ລອງຄິດເບິ່ງວ່າມັນຈະຍາກຊ່ຳໃດໃນການເປັນຢູ່ທຸກວັນນີ້ໂດຍປາສຈາກໄຟຟ້າແລະແບດຕະຣີ.

ບໍ່ແມ່ນເຫດການທັງໝົດຂອງການປ່ຽນແປງ-ຊີວິດຄວນຈະເອົາປຽບຫຼືມອງຂ້າມ. ພິຈາລະນາການຄືນພຣະຊົນຂອງພຣະເຢຊູຄຣິດ. ການຄືນພຣະຊົນຂອງພຣະຄຣິດໄດ້ເປັນສູນກາງຄວາມຈິງຂອງຄຣິສຕະສາສນາເປັນເວລາສອງພັນປີມາແລ້ວ, ແລະກໍໜ້າເສົ້າໃຈ, ມີຄຣິສຕຽນຫຼາຍຄົນສາມາດຈົດຈຳຂໍ້ມູນຕ່າງໆຂອງການຄືນພຣະຊົນຂະນະທີ່ບໍ່ເຄີຍພິຈາລະນາເອົາຄວາມຈິງນັ້ນມາປະຕິບັດໃຊ້ໃນຊີວິດປະຈຳວັນຂອງພວກເຂົາ. ພຣະເຢຊູໄດ້ຊັຍຊະນະຕໍ່ອຳນາດຂອງຄວາມຜິດບາບແລະຄວາມຕາຍແມ່ນຫັນປ່ຽນ-ທັສນະສຳລັບຊີວິດຂອງພວກເຮົາຢ່າງແທ້ຈິງ-ທັງໃນປັດຈຸບັນແລະຕລອດໄປເປັນນິດ.

**ພຣະຄັມພີກ່າວວ່າຢ່າງໃດ? (ຈົ່ງເບິ່ງຕາມຂໍ້ 1, 2, 3 )**

**<u>ການສຶກສາພຣະຄັມພີ</u>**

### 1. 1 ໂກຣິນໂທ 15:20-22

*20.* ແຕ່ທີ່ຈິງພຣະຄຣິດໄດ້ຖືກຊົງບັນດານໃຫ້ຄືນພຣະຊົນແລ້ວ ແລະຊົງເປັນຜົນແລກໃນພວກຄົນທີ່ລ່ວງຫຼັບໄປແລ້ວນັ້ນ. 21. ເພາະວ່າຄວາມຕາຍໄດ້ມີມາທາງມະນຸດສັນໃດ ການຄືນມາຈາກຕາຍກໍມີມາທາງມະນຸດສັນນັ້ນ. 22. ດ້ວຍວ່າຄົນທັງປວງໄດ້ຕາຍເພາະກ່ຽວເນື່ອງກັບອາດາມສັນໃດ ຄົນທັງປວງກໍຈະຖືກຊົງບັນດານໃຫ້ມີຊີວິດເພາະກ່ຽວເນື່ອງກັບພຣະຄຣິດສັນນັ້ນ.

ກ່ອນຈະມາເຖິງຂໍ້ພຣະຄຳນີ້, ທ່ານໂປໂລໄດ້ອະທິບາຍຄວາມສຳຄັນຂອງການຄືນພຣະຊົນຊຶ່ງເປັນປະຫວັດສາດແທ້ຈິງ. ທ່ານໄດ້ຢັ້ງຢືນໃນຂໍ້ 14, "ຖ້າພຣະຄຣິດບໍ່ໄດ້ຊົງຄືນພຣະຊົນແລ້ວ ການປະກາດຂອງພວກເຮົາກໍບໍ່ມີປະໂຫຍດ ແລະຄວາມເຊື່ອຂອງພວກເຈົ້າກໍບໍ່ມີປະໂຫຍດເໝືອນກັນ" ທ່ານໂປໂລໄດ້ໂຕ້ຕອບວ່າຖ້າບໍ່ມີການຄືນພຣະຊົນ, ຈາກນັ້ນເຖິງແມ່ນພຣະຄຣິດກໍບໍ່ໄດ້ຟື້ນຄືນມາຈາກຕາຍ. ທ່ານໂປໂລຍັງໄດ້ສະເໜີໃຫ້ເຫັນຄວາມສຳນຶກຜິດແລະຊອບອັນເລິກເຊິ່ງທີ່ວ່າ ຖ້າວ່າບໍ່ມີການຄືນພຣະຊົນ, ຈາກນັ້ນການປະກາດວ່າພຣະເຢຊູໄດ້ເປັນຄືນມາແລ້ວ

ກໍເປັນພະຍານບໍ່ຈິງກ່ຽວເຣື່ອງຂອງພຣະເຈົ້າ (ຂໍ້ 15). ບົດສລຸບການສອນຂອງທ່ານໂປໂລ, ຖ້າວ່າພຣະຄຣິດບໍ່ໄດ້ຟື້ນຄືນມາ.....

- ...ທ່ານໃຫ້ຄຳພະຍານບໍ່ຈິງກ່ຽວກັບພຣະເຈົ້າ (ຂໍ້ 15).
- ...ຄວາມເຊື່ອໃນພຣະຄຣິດຂອງທ່ານແມ່ນບໍ່ມີຄຸນຄ່າ (ຂໍ້ 17).
- ...ທ່ານຍັງຈະຢູ່ກັບຄວາມຜິດບາບຂອງທ່ານ (ຂໍ້ 17).

ການເລີ້ມຕົ້ນຂອງຂໍ້ 20, ທ່ານໂປໂລໄດ້ໃຊ້ພາບປະກອບເພື່ອອະທິບາຍເພີ້ມເຕີມຂອງການຕາຍຂອງພຣະຄຣິດວ່າມີຄວາມໝາຍຫຍັງສຳລັບມະນຸດຊາດທັງປວງ. ພຣະຄຣິດທີ່ໄດ້ຟື້ນຄືນແລ້ວນັ້ນແມ່ນ "ຊົງເປັນຜົນແຣກໃນພວກຄົນທີ່ລ່ວງຫຼັບໄປແລ້ວນັ້ນ." ໃນພຣະຄັມພີເດີມການສະຫຼອງພາກຜົນແຣກ, ພວກປະຊາຊົນໄດ້ນຳເອົາພືດຜົນທຳອິດ (ແລະດີທີ່ສຸດ) ຂອງພວກເຂົາຊຶ່ງເປັນສ່ວນຂອງການເກັບກ່ຽວທີ່ພວກເຂົານຳເປັນເຄື່ອງຖວາຍຕໍ່ພຣະເຈົ້າ (ກົດລະບຽບການເລວີ 23:9-14). "ຜົນແຣກໄດ້ຊີ້ໃຫ້ເຫັນວ່າໝາກຜົນທັງໝົດກໍໄກ້ຈະຕາມມາ." ຄວາມສຳຄັນທີ່ສຸດຂອງພາບປະກອບອັນນີ້ຄືວ່າການຄືນພຣະຊົນຂອງພຣະຄຣິດເກີນກວ່າຜົນຂອງຄົນອື່ນໆ, ເມື່ອພວກທີ່ຕິດຕາມພຣະອົງຈະຟື້ນຄືນມາຈາກຄວາມຕາຍ. ຂະນະທີ່ຄວາມຕາຍຝ່າຍເນື້ອໜັງເປັນສິ່ງທີ່ຫຼີກລ້ຽງບໍ່ໄດ້, ການຄືນພຣະຊົນຂອງພຣະເຢຊູສະແດງໃຫ້ເຫັນວ່າຄວາມຕາຍຂອງພວກເຮົາບໍ່ແມ່ນຈຸດຈົບ.

ໃນທັສນະຂອງພວກທີ່ປະຕິເສດວ່າບໍ່ມີພຣະເຈົ້າ, ຄວາມຕາຍແມ່ນຈຸດຈົບສິ້ນ, ມັນເປັນຈຸດຈົບຂອງແຕ່ລະບຸກຄົນ. ບໍ່ວ່າແມ່ນຫຍັງທີ່ທ່ານໄດ້ຄິດ, ໄດ້ເວົ້າ, ຫຼືໄດ້ເຮັດມາໃນຊີວິດນີ້, ທ່ານກໍຈະຈົບລົງເໝືອນກັບຄົນອື່ນໆອີກ, ແລະຄືກັນທັງໝົດຄື: ຕາຍ.

| ການຄືນພຣະຊົນຂອງພຣະເຢຊູໃຫ້ຄວາມຫວັງແກ່ພວກເຮົາຢ່າງໃດ? |
|---|

ບໍ່ມີສິ່ງໃດທີ່ທ່ານໄດ້ກະທຳໃນຊີວິດມີຄວາມສຳຄັນຍິ່ງໃຫຍ່ຂະນະທີ່ທ່ານຈະປະເຊີນກັບການພິພາກສາແລະບໍ່ມີຊີວິດຫຼັງຄວາມຕາຍ. ອັນນີ້ເປັນໜ້າສົງສານ, ເມື່ອສລຸບຜົນຕາມຂັ້ນຕອນຂອງທັສນະນີ້ມັນບໍ່ມີຄວາມຫວັງ. ບໍ່ວ່າທ່ານຈະໄດ້ເຮັດສິ່ງດີຫຼືຊົ່ວແນວໃດກໍຕາມ, ໃນຕອນສຸດທ້າຍ, ທ່ານກໍຕາຍແລະກັບໄປເປັນຝຸ່ນດິນອີກ.

ໃນການສົມທຽບກັບທັສນະແບບນີ້ກໍຄືຄຳເວົ້າຂອງທ່ານໂປໂລໃນຂໍ້ 21-22 ທີ່ວ່າໂດຍຜ່ານມະນຸດຄົນດຽວໄດ້ນຳເອົາຄວາມຕາຍເຂົ້າມາແຕ່ວ່າໂດຍຜ່ານມະນຸດອີກຄົນນຶ່ງໄດ້ນຳເອົາຊີວິດມາ.

ການຄືນພຣະຊົນຂອງພຣະຄຣິດສະແດງອອກໃຫ້ເຫັນການປ່ຽນແປງອັນໃຫຍ່ຫຼວງ. ຄວາມຜິດບາບຂອງອາດາມໄດ້ນຳເອົາຄວາມຕາຍເຂົ້າມາໃນໂລກ, ແຕ່ວ່າຄວາມປ່ຽນແປງອັນນີ້ແມ່ນ-ສິ່ງທີ່ພຣະຄຣິດໄດ້ກະທຳ-ຊຶ່ງໝາຍເຖິງວ່າຄວາມຕາຍມັນບໍ່ແມ່ນສິ່ງທີ່ຄວນຈະເປັນ. ໂດຍຜ່ານພຣະຄຣິດພວກເຮົາມີທາງອອກຈາກຄວາມຫຍຸ້ງຍາກຂອງມະນຸດທີ່ໄດ້ສ້າງຂຶ້ນຕໍ່ຊີວິດແລະຕໍ່ການຊົງສ້າງຂອງພຣະເຈົ້າ. ເຫດການປະຫວັດສາດຊິ້ນນີ້ໃນຈັກກະວານໄດ້ພິກປີ້ນຄວາມຜິດບາບຂອງພວກເຮົາພ້ອມທັງຜົນກັມຂອງຄວາມຫາຍຍະນະຂອງມັນ.

## 2. 1 ໂກຣິນໂທ 15:23-28

*23.* ແຕ່ຈະເປັນໄປຕາມລຳດັບຂອງແຕ່ລະຄົນ ຄືພຣະຄຣິດຊົງເປັນຜົນແຣກ ຕໍ່ມາກໍແມ່ນຄົນທັງປວງທີ່ເປັນຢູ່
ຝ່າຍພຣະຄຣິດໃນເວລາພຣະອົງສະເດັດມາປາກົດ. 24. ຕໍ່ຈາກນັ້ນຈະເປັນຄາວສຸດທ້າຍ ຄືເມື່ອພຣະອົງ
ຈະຊົງຍົກເລີກການປົກຄອງ ກັບທັງອານຸພາບແລະອຳນາດທຸກໆຢ່າງເສັຽ ແລ້ວຈະຊົງມອບລາດຊະອານາ
ຈັກໄວ້ແກ່ພຣະເຈົ້າຄືພຣະບິດາ. 25. ເພາະວ່າຈຳເປັນພຣະອົງຈະຊົງສະເຫວີຍຣາດຢູ່ກ່ອນ ຈົນກວ່າພຣະ
ເຈົ້າຈະຊົງປາບສັດຕຣູທັງປວງໃຫ້ຢູ່ໃຕ້ພຣະບາດຂອງພຣະອົງ. 26. ສັດຕຣູຕົວສຸດທ້າຍທີ່ຈະຖືກຊົງຍົກ
ເລີກເສັຽນັ້ນແມ່ນຄວາມຕາຍ. 27. ເຫດວ່າ, *'ພຣະເຈົ້າໄດ້ຊົງປາບສິ່ງສາລະພັດລົງໃຕ້ພຣະບາດຂອງພຣະ
ອົງແລ້ວ'* ແຕ່ເມື່ອພຣະຄັມພີກ່າວວ່າ, *'ຊົງປາບສິ່ງສາລະພັດລົງນັ້ນ'* ກໍປາກົດຄັກແນ່ວ່າ ເວັ້ນເສັຽແຕ່ພຣະ

ຜູ້ຊົງປາບສິ່ງສາລະພັດລົງຢູ່ໃຕ້ພຣະອົງ. 28. ແລະເມື່ອສິ່ງສາລະພັດໄດ້ຖືກຊົງປາບລົງຢູ່ໃຕ້ພຣະອົງແລ້ວ ເມື່ອນັ້ນອົງພຣະບຸດຈະຊົງຍອມລົງຢູ່ໃຕ້ພຣະເຈົ້າ ຜູ້ຊົງປາບສິ່ງສາລະພັດລົງຢູ່ໃຕ້.

ການຄືນພຣະຊົນຂອງພຣະຄຣິດມີຄວາມຈິງອັນຍິ່ງໃຫຍ່ສອງປະການ:

1. ມັນບໍ່ແມ່ນວ່າໃຜຜູ້ນຶ່ງຈະຄືນມາຈາກຕາຍໄດ້; ແຕ່ແມ່ນພຣະເຈົ້າທີ່ມີຮ່າງເປັນມະນຸດ.
2. ຣິດອຳນາດຂອງພຣະເຢຊູທີ່ເໜືອຄວາມຕາຍມີຄວາມໝາຍວ່າພຣະອົງເປັນພຣະເຈົ້າຂອງທຸກສິ່ງ.

ໃນລະຫວ່າງການຮັບໃຊ້ໃນໂລກນີ້ຂອງພຣະອົງ, ພຣະເຢຊູໄດ້ປະກາດວ່າຊົງເປັນພຣະເຈົ້າ. ພຣະອົງໄດ້ຍົກໂທດຄວາມຜິດບາບຂອງຝູງຊົນ (ມັດທາຍ 9:4-5), ແນະນຳຕົວພຣະອົງເອງໃນຖານະເປັນພຣະເຈົ້າຂອງວັນຊະບາໂຕ (12:8), ໄດ້ຮູ້ຈັກຄວາມຄຶດໃນໃຈມະນຸດ (ຂໍ້ 25), ແລະໄດ້ກ່າວວ່າພຣະອົງເປັນນຶ່ງກັບພຣະບິດາ (ໂຢຮັນ 10:30). ຄຳປະກາດຂອງພຣະເຢຊູຈະບໍ່ມີຄວາມໝາຍອັນໃດເລີຍຖ້າຫາກວ່າພຣະອົງຍັງຢູ່ໃນຫຼຸມຝັງສົບ. ແຕ່ວ່າ, ການຄືນພຣະຊົນຂອງພຣະເຢຊູແມ່ນຫຼັກຖານຍິ່ງໃຫຍ່ທີ່ພຣະອົງຄືຜູ້ທີ່ພຣະອົງໄດ້ປະກາດວ່າພຣະອົງຊົງເປັນ. ພຣະເຈົ້າ, ໄດ້ສັນຍາຈະປະທານພຣະເມຊີອາ, ພຣະຜູ້ໂຜດໃຫ້ພົ້ນຂອງມວນມະນຸດ. ມີແຕ່ພຣະເຈົ້າເທົ່ານັ້ນມີອຳນາດເໜືອຄວາມຕາຍແລະພຣະເຢຊູໄດ້ສະແດງຣິດອຳນາດນັ້ນຜ່ານທາງການຄືນພຣະຊົນຂອງພຣະອົງ.

ໂດຍການເອົາຊະນະຄວາມຕາຍໃນຖານະເປັນສັດຕຣູ, ພຣະເຢຊູໄດ້ສະແດງໃຫ້ເຫັນວ່າພຣະອົງເປັນພຣະເຈົ້າຂອງທຸກສິ່ງທັງປວງ. ໃນຕອນຕົ້ນໆຂອງຊີວິດຢູ່ໃນໂລກຂອງພຣະເຢຊູ, ພວກເຫຼົ່າສາວົກໄດ້ເຫັນພຣະເຢຊູໄດ້ອອກຄຳສັ່ງຢ່າງມີພະລັງຫຼາຍຄັ້ງ. ພຣະອົງໄດ້ຫ້າມລົມແລະຄື້ນທະເລທີ່ທະເລຄາລີເລ (ມັດທາຍ 8:23-27). ຜີຮ້າຍໄດ້ຍອມຈຳນົນຕໍ່ພຣະອົງເມື່ອພຣະອົງໄດ້ຂັບໄລ່ພວກມັນ (ຂໍ້ 28-34). ພຣະອົງປິ່ນປົວຫຼາຍຄົນໃຫ້ດີຈາກການເຈັບປ່ວຍຂອງພວກເຂົາ (9:35). ພຣະອົງຍັງໄດ້ນຳເອົາຄົນຄືນມາຈາກຕາຍ (ຂໍ້ 23-25). ພວກເຮົາເຫັນທັງພະລັງຝ່າຍທຳມະຊາດແລະຝ່າຍວິນຍານຢູ່ໃຕ້ອຳນາດຂອງພຣະຄຣິດ. ແຕ່ວ່າ, ເມື່ອພຣະເຢຊູໄດ້ຟື້ນຄືນມາຈາກຕາຍຝ່າຍຮ່າງກາຍ, ດ້ວຍຮ່າງກາຍໃໝ່ທີ່ບໍ່ຮູ້ເປື່ອຍເນົ່າຊຶ່ງບໍ່ກ່ຽວກັບຄວາມຕາຍອີກ, ພຣະອົງໄດ້ສະແດງໃຫ້ເຫັນວ່າແມ້ແຕ່ຄວາມຕາຍກໍຍອມຈຳນົນຕໍ່ອຳນາດຂອງພຣະອົງ.

| ແມ່ນຫຍັງຄືການທ້າທາຍທີ່ທ່ານພົບໃນການຢູ່ໃຕ້ບັງຄັບຂອງພຣະຄຣິດ? |
|---|

## 3. 1 ໂກຣິນໂທ 15:54-58

*54.* ແລະເມື່ອໃດກາຍທີ່ຮູ້ຈັກເປື່ອຍເນົ່ານີ້ຈະໄດ້ສວມກາຍທີ່ບໍ່ຮູ້ຈັກເປື່ອຍເນົ່າ ແລະກາຍທີ່ຕາຍເປັນນີ້ຈະໄດ້ສວມກາຍທີ່ຕາຍບໍ່ເປັນ ເມື່ອນັ້ນແຫຼະ, ຄວາມທີ່ຂຽນໄວ້ໃນພຣະຄັມພີນັ້ນຈະສຳເລັດ ຄືວ່າ, "ຄວາມຕາຍໄດ້ຕົກເຖິງປະຣາຊັຍແລ້ວ". *55.* ໂອ ຄວາມຕາຍເອີຍ, ຊັຍຊນະຂອງມຶງຢູ່ໃສ ໂອຄວາມຕາຍເອີຍ, ໄລພິດຂອງມຶງຢູ່ໃສ". *56.* ໄລພິດຂອງຄວາມຕາຍຄືຄວາມບາບ ແລະລິດອຳນາດຂອງຄວາມບາບຄືພຣະບັນຍັດ. 57. ແຕ່ວ່າຈົ່ງຂອບພຣະຄຸນພຣະເຈົ້າຜູ້ຊົງປະທານຊັຍຊນະແກ່ເຮົາທັງຫຼາຍ ດ້ວຍພຣະເຢຊູຄຣິດເຈົ້າຂອງພວກເຮົາ. 58. ດັ່ງນີ້ແຫຼະ, ພີ່ນ້ອງທີ່ຮັກຂອງເຮົາເອີຍ, ເຈົ້າທັງຫຼາຍຈົ່ງຕັ້ງໝັ້ນຢູ່ ຢ່າຫວັ່ນໄຫວ ຈົ່ງປະຕິບັດງານຂອງອົງພຣະຜູ້ເປັນເຈົ້າໃຫ້ບໍຣິບູນທຸກເວລາ ດ້ວຍຮູ້ວ່າໃນອົງພຣະຜູ້ເປັນເຈົ້າ ການຂອງພວກເຈົ້ານັ້ນຈະບໍ່ໄຮ້ປໂຍດ.

| ແມ່ນຫຍັງຄືບາງຫົນທາງທີ່ຊາວຄຣິສຕຽນຊຶ່ງບາງຄັ້ງດຳລົງຊີວິດໃນຖານະທີ່ຖືກຜ່າຍແພ້? |
|---|

ການປ້ອງກັນຮັກສາຂອງທ່ານໂປໂລກ່ຽວເຣື່ອງການຄືນພຣະຊົນກໍພົບຢູ່ທົ່ວໃນພຣະຄຳ 1 ໂກຣິນໂທ 15 ກໍບົ່ງບອກຢ່າງແຈ່ມແຈ້ງແລ້ວວ່າພຣະຄຣິດໄດ້ຟື້ນຄືນມາຈາກຕາຍຢ່າງແທ້ຈິງ; ດັ່ງນັ້ນ, ໃນການຕອບກັບ, ພວກເຮົາຈະ

ປະສົບການກັບການຄືນພຣະຊົນ. ຂນະທີ່ຄວາມຕາຍໄດ້ຖືກທຳລາຍແລ້ວ, ສິ່ງທີ່ພວກເຮົາກະທຳໃນຊີວິດຂອງພວກເຮົາມັນຈຶ່ງມີຄວາມສຳຄັນຢ່າງແທ້ຈິງ. ດຽວນີ້ຄວາມຕາຍຍັງມີອຳນາດເໜືອພວກເຮົາ, ແຕ່ວ່າມັນກໍເປັນພຽງເວລາອັນສັ້ນໆເທົ່ານັ້ນ. ທ່ານໂປໂລໄດ້ສະແດງໃຫ້ເຫັນຜົນຂອງຄາວສຸດທ້າຍຂອງການຄືນພຣະຊົນຂອງພຣະເຢຊູໂດຍຍ້ຳຄືນພຣະຄັມພີເດີມສອງຂໍ້.

- "ພຣະອົງຈະທຳລາຍຄວາມຕາຍຕລອດໄປເປັນນິດ." (ເອຊາຢາ 25:8).
- "ເຮົາຈະໄຖ່ປະຊາຊົນນີ້ໃຫ້ພົ້ນຈາກພິພົບຄົນຕາຍ ຫຼືຊ່ວຍພວກເຂົາໃຫ້ພົ້ນຈາກອຳນາດຂອງຄວາມຕາຍ ໂອຄວາມຕາຍເອີຍ, ຈົ່ງມາພ້ອມກັບໄພວິບັດຂອງເຈົ້າ ໂອ ພິພົບຄົນຕາຍເອີຍ, ຈົ່ງມາພ້ອມກັບການທຳລາຍຂອງເຈົ້າ." (ໂຮເຊອາ 13:14).

ຣິດອຳນາດຂອງຄວາມຕາຍໄດ້ຖືກຍົກຍ້າຍອອກໄປແລ້ວໂດຍຊັຍຊະນະທີ່ໄດ້ຮັບໂດຍຜ່ານຄວາມຕາຍແລະການຄືນພຣະຊົນຂອງພຣະຄຣິດ. ຄວາມພິເສດຂອງຄຳພະຍານຄຣິສຕຽນໃນການຄືນພຣະຊົນຂອງພຣະເຢຊູແມ່ນຫຼັກຖານອັນດຽວເທົ່ານັ້ນໃນປະຫວັດສາດທີ່ຫັນກັບຄວາມຕາຍໄດ້. ຊັຍຊນະຕໍ່ຄວາມຕາຍຂອງພຣະເຢຊູນຳເອົາການນຳໃຊ້ຫຼາຍຢ່າງໃຫ້ແກ່ພວກເຮົາ.

- ຂະນະທີ່ຄວາມຕາຍແມ່ນຜົນກັມຂອງຄວາມບາບ(ໂຣມ 6:23), ຫຼັງຈາກນັ້ນຊັຍຊນະຄວາມບາບຂອງພຣະເຢຊູກໍຊະນະອຳນາດຂອງຄວາມບາບໄດ້ເຊັ່ນກັນ. ພຣະເຢຊູບໍ່ໄດ້ພຽງແຕ່ປ່ຽນແປງ "ເກມອັນສຸດທ້າຍ" ຂອງພວກເຮົາ; ພຣະອົງໄດ້ປ່ຽນທິດທາງການດຳລົງຊີວິດຂອງພວກເຮົາໃນໂລກແຫ່ງນີ້ໃນປັດຈຸບັນນີ້.
- ການຄືນພຣະຊົນຂອງພຣະຄຣິດມີຄວາມໝາຍວ່າພວກເຮົາບໍ່ໄດ້ໃຊ້ຊີວິດຂອງພວກເຮົາໃຫ້ເສັຍປໂຍດ. ທຸກໆສິ່ງທີ່ພວກເຮົາກະທຳມີຄວາມສຳຄັນ. "ການຂອງພວກເຈົ້າໃນອົງພຣະຜູ້ເປັນເຈົ້ານັ້ນຈະບໍ່ໄຮ້ປໂຍດ" (ຂໍ້ 58).

ຄວາມດຶງດູດຝ່າຍລົບທັງປວງກໍຍັງຊອກຫາທາງທີ່ທ່ວງດຶງພວກເຮົາໃຫ້ອອກຈາກຄວາມດີຂອງພຣະເຈົ້າ. ແຕ່ວ່າຂນະທີ່ພວກເຮົາໄດ້ອອກຈາກການເປັນຂ້າທາດຂອງຄວາມຜິດບາບ, ພວກເຮົາຄວນແບ່ງປັນເສຣີພາບນັ້ນກັບຄົນອື່ນໆ. ນີ້ແມ່ນວຽກງານທີ່ການຄືນພຣະຊົນໄດ້ເອີ້ນພວກເຮົາ, ແລະມັນຈະບໍ່ແມ່ນວຽກງານທີ່ໄຮ້ປໂຍດ.

| ກຸ່ມຂອງພວກເຮົາສາມາດຊ່ວຍຄົນອື່ນຢ່າງໃດໃຫ້ດຳລົງຊີວິດແຫ່ງຊັຍຊນະທີ່ພວກເຮົາມີໃນພຣະຄຣິດ? |
|---|

## <u>ນຳໃຊ້ໃນຊີວິດ</u>:

ການຄືນພຣະຊົນຂອງພຣະເຢຊູແມ່ນພື້ນຖານຫຼັກຄວາມເຊື່ອແລະຄວາມຈິງທີ່ປ່ຽນແປງທຸກໆຊີວິດ. ທ່ານຈະດຳລົງຊີວິດຢ່າງໃດໃນຄວາມຈິງອັນນີ້? ຈົ່ງເລືອກເອົາການນຳໃຊ້ອັນນຶ່ງຕໍ່ລົງໄປນີ້:

- **ສາລະພາບ.** ຖ້າມີບ່ອນໃດໃນຊີວິດຂອງທ່ານຊຶ່ງທ່ານໄດ້ອະນຸຍາດໃຫ້ຄວາມບາບມີອຳນາດເໜືອທ່ານ, ສາລະພາບຄວາມບາບນັ້ນຕໍ່ພຣະເຈົ້າ.
- **ຮັບໃຊ້.** ຊອກຫາບ່ອນທີ່ທ່ານສາມາດເຂົ້າສ່ວນຮັບໃຊ້ວຽກງານຂອງພຣະເຈົ້າ. ຈົ່ງດຳລົງຊີວິດຢູ່ໃຕ້ອຳນາດຂອງພຣະຄຣິດ, ທີ່ຮູ້ຈັກແລ້ວວ່າທ່ານຈະຮັບໃຊ້ພຣະອົງຢ່າງບໍ່ໄຮ້ປໂຍດຈັກເທື່ອ.
- **ແບ່ງປັນ.** ບອກບາງຄົນວ່າການຄືນພຣະຊົນຂອງພຣະຄຣິດປ່ຽນແປງຊີວິດຂອງທ່ານຢ່າງໃດ.

ມັນເປັນການສຳຄັນທີ່ຮູ້ຈັກຂໍ້ມູນຂອງການຄືນພຣະຊົນ. ມັນຍັງຈຳເປັນສຳລັບພວກເຮົາທີ່ຈະເຂົ້າໃຈທາງຂອງການຄືນພຣະຊົນທີ່ມີຜົນສະທ້ອນຕໍ່ຊີວິດຂອງພວກເຮົາ- ແລະແບ່ງປັນຄວາມຈິງເຫຼົ່ານີ້ໃຫ້ແກ່ຄົນອື່ນໆ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA